ການປົກຄອງຂອງລາວອິສຣະໃໝ່ເພື່ອປະຊາທິປະໄຕ

ໃນການຕໍ່ສູ້ນັ້ນ ພວກເຮົາຕ້ອງເອົາຊາຕເປັນຫຼັກ ຄວາມລັບບໍ່ໃຫ້ຄົນພາຍນອກ
ຮູ້ເດັດຂາດ ນອກຈາກຄົນພາຍໃນການຈັດຕັ້ງ ຕ້ອງໃຫ້ຮູ້ຈັກ ໃນວິທີການຂອງ
ສັດຕຣູທີ່ຢູ່ໄກແລະຢູ່ໃກ້ ສ່ວນວຽກການກອບກູ້ອິສຣະພາບລາວຕ້ອງເຮັດດວ້ຍ
ຄວາມພໍໃຈຂອງຄົນທີ່ຕ້ອງການສະໝັກເຂົ້າເຮັດການເມືອງ ໃນຣະບອບປະຊາ
ທິປະໄຕຂອງລາວອິສຣະໃໝ່ ໄດ້ສ້າງຕັ້ງຂື້ນເມື່ອວັນທີ -25-5-00- ພໍຄົບ
ຮອບໜຶ່ງປີແລ້ວກໍ່ໄດ້ເຜີຍແຜ່ໃຫ້ຊາວລາວທັງໃນແລະຕ່າງປະເທສແລະທົ່ວ
ໂລກໄດ້ເຂົ້າໃຈເຖິງເນື້ອໃນໃຈຄວາມແລະຈຸດໝາຍປາຍທາງຂອງຂບວນການ
ລາວອິສຣະໃໝ່ໃນຣະບອບປະຊທິປະໄຕ ຕາມຄວາມເປັນຈິງເມືອງລາວກໍ່ມີ
ການຖືກັນມາແລ້ວສອງຣະບອບ ຄືຣະບອບສັກດີນາແລະຣະບອບສັງຄົມນິຍົມ
ປັດຈຸບັນການທຽບເທົ້າທັງສອງຣະບອບນີ້ກໍ່ມີຜົລປະໂຍດໃຫ້ແກ່ປະເທສຊາຕ
ລາວເປັນບາງຢ່າງແຕ່ກໍ່ບໍ່ຖືກກັບຈິດໃຈຂອງປະຊາຊົນລາວດີພໍ ເພາະວ່າສະ
ພາບການຂອງທັງສອງຣະບອບ ບໍ່ຮູ້ເລີຍວ່າຈຸດໝາຍປາຍທາງນັ້ນ ຢູ່ທີ່ໃດ
ແລະສ້າງປະເທສເພື່ອຫຍັງ-ຄວາມຈະເຣີນຢູ່ທີ່ໃດບໍ່ມີໃຜຮູ້ ແຕ່ປົກຄອງກັນ
ຕາມຣະບອບຕ່າງປະເທສ ໂດຍບໍ່ແມ່ນຣະບອບຂອງຕົນເອງ ອັນນີ້ ຄືຫອຍ
ນໍາຄາດ-ຣະບອບທີ່ຕ້ອງຖືກໃຈປະຊາຊົນລາວກໍ່ຄືຣະບອບທີ່ມີສິນທັມ ການ
ປົກຄອງຂອງຣະບອບຕ່າງປະເທສໃນເມືອງລາວກໍ່ມີການປ່ຽນແປງທຸກໆ-30
ປີຈົ່ງເບິ່ງສະພາບການທີ່ຜ່ານມາ ທີ່ຈະກ່າວຕໍ່ໄປນີ້ ໃນປີ-1914-ຫາ-1918
ສົງຄາມໂລກຄັ້ງທີ-1-ລາວເຮົາເປັນຫົວເມືອງຂື້ນຂອງຝຣັ່ງ ແລ້ວ-30-ປີ
ຕໍ່ມາໃນປີ-1939-ຫາປີ-1945-ສົງຄາມໂລກຄັ້ງທີ-2-ພອ້ມທັງສົງຄາມ
ອິນດູຈີນ-30-ປີຕໍ່ມາເຖິງປີ-1945-ຫາ-1975-ອາເມຣິກາເສັຽສົງຄາມ
ວຽດນາມ-ລາວເປັນຄອມມູນິສ-ແລະ-30-ປີຕໍ່ໄປກໍ່ຄື ເລີ້ມຕົ້ນແຕ່ປີ-08
ເມືອງລາວຈະມີການປ່ຽນແປງ ໄປສູ່ຣະບອບໃດຣະບອບໜຶ່ງແຕ່ແນ່ໃຈວ່າ
ປະຊາຊົນລາວມັກຄວາມຍຸຕິທັມ ແລະບໍ່ມັກເປັນທາດຮັບໃຊຂອງຕ່າງຊາຕ
ອາຈຕ້ອງແມ່ນຣະບອບການປົກຄອງລາວອິສຣະຈະເປັນຣະບອບສຸດທາ້ຍ

ໃນການປົກຄອງປະເທສລາວແລະປະຊາຊົນລາວ ໃຫ້ມີຄວາມຈະເຣີນຮຸ່ງເຮືອງໄປຕາມຍຸກຕາມສມັຍຂອງສີບຍຸກຄື ຍຸກຍຸທການ-ພານຍັກ ຣັກມິຕ ສນິສທັມຈຳແຂນຂາດ ຣາຊ ໂຈນ ຊົນຮອ້ງທຸກ ຍຸກທະມິນ ຖິ່ນກາຂາວລາວ ສຣີວິລັຍ ແຕ່ຣະຍຸກນີ-30-ປີບໍ່ນັບຍຸກສຸດທ້າຍ ຄືຍຸກລາວສຣີວິລັຍ ຍຸກນີ້ຈະ ຈະເຣີນໄປຕຣອດເຖິງຂັ້ນສຸດຂີດ ກົງລໍ້ປະວັດສາດຂອງເມືອງລາວຈະບໍ່ ໂວ້ງຄືນມາອີກ ຈົ່ນກວ່າເມືອງລາວຈະພົບຄວາມຍຸດຕິທັມແລະຄວາມສຣີວິລັຍ ຈາກຂບວນລາວອິສຣະໃໝ່ເພື່ອປະຊາທິປະໄຕ

  ສວັນຈະບໍ່ຊວ່ຍຄົນທີ່ບໍ່ເຮັດຫຍັງເລີຍ ຢາ່ຄອງຄອຍຄວາມຫວັງໂດຍທີ່ບໍ່ໄດ້ເຮັດຫຍັງ ຂໍທາ່ນຈົ່ງຊວາຍກັນຮີບຮອ້ນໃຈໃຫ້ທັນກັບສະພາບການກະຣຸນາຢາ່ນອນຫຼັບທັບສິດພວກເຮົາຕອ້ງຕໍ່ສູ້ເພື່ອຄວາມເປັນທັມ

ສິນທັມຕອ້ງສະນະອະທັມ

ວັນສາ້ງຕັ້ງລາວອິສຣະໃໝ່ ເພື່ອປະຊາທິປະໄຕ

<u>ຄັ້ງວັນທີ-25-5-00</u>

ຂໍຮຽນທາ່ນພໍ່ແມ່ປະຊາຊົນລາວທຸກເຜົ່າພັນ ຊຶ່ງເປັນຄົນລາວທີ່ຮັກຊາຕຮັກຄວາມເປັນທັມຮັກຄວາມເປັນລາວແລະມີນໍ້າໃຈສູງສົ່ງເປັນຜູ້ໜຶ່ງທີ່ຈະນຳເອົາທິສດີຫຼືຄຳສອນຂອງອົງພຼະສັມມາສັມພຸທເຈົ້າ ຊຶ່ງເປັນພຼະສາສດາຈາຣເອກຂອງໂລກ ເພື່ອນຳໄປເປັນທິສດີແລະພາກປະຕິບັດເຂົ້າໄປໝູນໃຊ້ ໃນການປົກຄອງປະເທສລາວ ໃຫ້ກາຍເປັນແຜ່ນດິນທັມນຳພາ້ຊາວລາວໄປສູ່ຄວາມສງົບສຸຂ ເຖິງນາທີສຸດທາ້ຍແລ້ວທີ່ພວກເຮົາ ຈະສະລະເວລາແລະສະລະເຮື່ອແຮງປະກອບສວ່ນຮັບໃຊ້ຂບວນການລາວອິສຣະໃໝ່ເພື່ອປະທິປະໄຕແລະເພື່ອປົດແອກເຫລັກອອກຈາກຄໍໃຫ້ປະຊາຊົນລາວແລະປະເທສລາວຕອ້ງເປັນປະເທສທີ່ມີສິນທັມ ມີຄວາມຍຸດຕິທັມ ມີອິສຣະພາບ ມີເອກຣາຊ ມີປະຊາທິປະໄຕທົ່ວປະເທສປະເທສລາວເປັນປະເທສທີ່ດອ້ຍພັທນາແລະລາ້ຫລັງທາງດາ້ນວັຖຖູແລະຈິຕໃຈກໍ່ຍອ້ນພວກເຮົາຖືກແຊກແຊງກົດຂີ່ຂົ່ມເຫງຈາກຈັກພັດປາ່ເຖື່ອນອອ້ມຂາ້ງຫອ້ງຖິ່ນແລະຕາ່ງດາ້ວອື່ນໆມານານແສນນານຢາ່ງເວີຍຄໍບໍ່ຂຶ້ນ

ຕົກມາຮອດປະຈຸບັນນີ້ ທ່ານຮູ້ບໍ່ວ່າປະເທສລາວເຮົາກຳລັງດີ້ນຕາຍ ຈະກາຍໄປເປັນຂອງຕ່າງຊາຕຢ່າງບໍ່ຄາດຝັນໃນຖ້ານກາງປະເທສຈະຕາຍຢູ່ນີ້ມີທັງຄວາມຊື່ນຊົມແລະຂົມຂື່ນຂອງປະຊາຊົນ ແຕ່ຜູ້ຊື່ນຊົມກໍ່ໄດ້ແກ່ຜູ່ມີຢູ່ມີກິນ ຜູ່ເຫັນກະດູກສັນຫລັງຂອງຊາຕຄືສໍ້ກົງນັ້ນເອງ ຜູ້ຂົມຂື່ນກໍ່ໄດ້ແກ່ປະຊາຊົນຄົນທຸກຍາກລຳບາກຫາເຊົ້າກິນຄ່ຳ ລຳບາກກາກກຳທຳງານເຮັດໄຮ່ໃສ່ນາຫາກິນຊອບທັມນັ້ນເອງ ຄວາມຂັດແຍ່ງຣະວ່າງຜູ່ຊື່ນຊົມແລະຂົມຂື່ນທັງສອງນັ້ນ ຈຶ່ງມີການຂ້າຟັນລັນແທງກັນແລະແບ່ງແຍກພັກພວກອອກເປັນຫລາຽກຸ່ມມານານແລ້ວ ເພາະພວກເຮົາບໍ່ລົງລອຽກັນໃຜກໍ່ວ່າໃຜດີບໍ່ມີເຫຕຜົນ ຕ່າງຄົນຕ່າງກໍ່ເບັ່ງຣັສໝີຂອງຄວາມອາຫັງກາບໍ່ເຂົ້າໃຈກັນ ຍອ້ນຣະດັບຈິດໃຈບໍ່ສູງສົ່ງ ຈຶ່ງຖືກຊາຕອື່ນຍຸ່ແຍ່ດວັຽເລ້ຫລອ່ມຫວັງກືນກິນຊາຕລາວທັງເຕີ້ຍທັງຫລອ່ງ ດັ່ງນັ້ນຄວາມອອ່ນແອກໍ່ຣົດນອັຽຖອຍລົງຕາມລຳດັບ ສັຕຕຣູພາຽນອກກໍ່ແຊກແຊງ ດິນດອນຕອນຫຍ້າກໍ່ຖືກຢຶດຄອງ ຈາກຕ່າງດ້າວທຸກດ້ານ ສ່ວນປະຊາຊົນນັບມື້ທຸກຍາກລຳບາກ ຂາດແຄນເຂົ້າປາອາຫານ ຂາດສິດທິມະນຸສທັມ ເພາະຕົນຊ້ຳງຢຽບປາກນົກຢຽບທັງປາກຢຽບທັງຫອ້ງຈົ່ນພົ່ນອ້ງບໍ່ເຂົ້າໃຈກັນ ຍອ້ນພວກເຮົາຂາດຄວາມມີສະຕິຣະວັງຕົວຂາດຄວາມຮັກແພງປຸ້ມລຸມສາມະຄີປອງດອງ ຂາດຄວາມຮັກຊາຕຍອມເປັນທາດຕ່າງດ້າວ ຂາດຄວາມເປັນລາວແລະເຫັນແກ່ຕົວ ພາກັນມົວເມົານຳແຕ່ຍົດຖາບັນດາສັກບໍ່ມີຄວາມກ້ຳເກິ່ງກັນ ສ່ວນຜູ້ນຳກໍ່ຂາດຄວາມມີສິນທັມປະຈຳໃຈ ຄອຍຂູດເນື້ອເຖືອໜັງຂອງປະຊາຊົນກິນໄປວັນໆ ແລະເຮັດນາໃສ່ຫລັງປະຊາຊົນ ຜູ້ກິນກໍ່ກິນພໍຮາກຜູ້ຢາກກໍ່ຢາກພໍຕາຍ ພວກນີ້ບໍ່ເບິ່ງບໍ່ແຍງປະຊາຊົນໃຫ້ທົ່ວເຖິງ ແລະກໍ່ບໍ່ໄດ້ສົນໃຈວ່າຈະທຸກຫຼືຍາກ

ຣັຖບາລຍຸກໃດໆ ກໍ່ປອ່ຽປະຣະເລີຍໄປຕາມຍະຖາກັມຕາມມີຕາມເກີດຢ່າງໜ້າສົມເພດເວທນາ ປະຊາຊົນທົ່ວປະເທສກໍ່ປຽບສະເໝືອນປາກາງທີບ ໜີບເຕງທັງສອງສັດຕຣູພາຽນອກແລະພາຽໃນ ສັດຕຣູພາຽໃນນັ້ນໄດ້ແກ່-ລາວຂ້າລາວ-ນັ້ນເອງ ຄົນດີມີສິນທັມກໍ່ພາກັນເອົາໄປຂ້າຖິ້ມໝົດ

ຖ້າຫາກມີການຝ່າຝືນຕ້ານທານນະໂຍບາຍແລະແນວຄິດລ້າຫລັງ ຂອງກຸ່ມກໍາອໍານາດປ່າເຖື່ອນແລະສັດຕຣູພາຍນອກໄດ້ເພົ່າການແຊກແຊງຈາກຕ່າງດ້າວ ຄືເສຖກິດປ່າເຖື່ອນແລະການລຶບລ້າງຮີດຄອງປະເພນີ ການຂະຫຍາຍສົງຄາມໄຕ້ດິນແບບໃໝ່ຂອງຕ່າງດ້າວໃນລາວ ເພີ້ມຂຶ້ນຫວັງກືນກິນລາວດ້ວຍການສືບພັນນັ້ນເອງ ທຸກໆຫົວເມືອງນອ້ຍໃຫ່ຍຄືດິນດອນຕອ່ນຫຍ້າ ຖືກຂາຍໃຫ້ນາຍທຶນໜ້າເລືອດຍອ້ນຄວາມທຸກຈົນຂອງປະຊາຊົນ ແລະລາວຜູ້ສລາດນອ້ຍທັງຫລາຍກໍ່ພາກັນຫອບສັງຂານໄປຢູ່ບ້ານນອກ ຍອມສະຣະໜ້າທີ່ການງານອັນສໍາຄັນ ໃຫ້ຕ່າງດ້າວຄວບຄຸມທຸກດ້ານບໍ່ວ່າດ້ານການເມືອງ ເສຖກິດສັງຄົມແລະວັທທະນະທັມອື່ນໆ ກໍ່ຖືກແຊກແຊງ ໂດຍທາງລັບແລະທາງກົງ ປະຊາຊົນລາວເຮັດຫຍັງບໍ່ໄດ້ ພຽງແຕ່ອົມຄວາມຄຽດແຄນໄວ້ໃນຊວງ ເພາະຫຸ່ນຂອງຕ່າງດ້າວຖອ້ມຕໍນັ້ນເອງ

ພໍ່ແມ່ພີ່ນອ້ງທີ່ເຄົາຣົບແລະທີ່ຮັກແພງທັງຫລາຍ ພວກເຮົາຈະປອ່ຍປະຣະເລີຍຕຣອດໄປຢ່າງນີ້ບໍ່ ຫຼືພວກເຮົາຈະບໍ່ເອນດູກູນາຮັກຄົນລາວຕາດໍາໆ ຄືກັນແດ່ບໍ່ນໍ ຍາມໃດ້ກໍ່ຈະປອ່ຍໃຫ້ຕ່າງຊາຕມາຢຽບຢ່ໍາກຽດແລະສັກສີຂອງລາວຕຣອດ ໂດຍບໍ່ມີໃຜຊິ່ຫວນຄະນຶງເຖິງຄວາມເປັນລາວນໍາກັນແດ່ບໍ່ນໍ ບໍ່ວ່າລາວຕາວັນອອກສິບສອງຈຸໄຕ້ ເມືອງແຖ່ງບ້ານເຈົ້າລາວກາຍເຊີລາ-ດຽນບຽນຟູ-ລາວຕາວັນຕົກ ອີສານ ລ້ານນາຊຽງໃໝ່ ລາວວຽງຕຸງໃນລັຕສາ່ນ-ພະມ້າ-ລາວເໜືອສິບສອງພັນນາລື້ ໃນມົນທົນຢຸ່ນນານ ແລະລາວໄຕ້ ຈະແຈະຊຽງແຕງ ພີ່ນອ້ງລາວຂອງພວກເຮົາທຸກໆເຂດແຄວ້ນທີ່ໄດ້ກ່ວມານີ້ ຖືກພວກກໍາອໍານາດປ່າເຖື່ອນທອ້ງຖິ່ນທໍຣະມານ ດວ້ຍຄວາມເຈັບແສບສາຫັດແລະກົ້ມໜ້າກົ້ມຕາເປັນຂີ້ຂອ້ຍຮັບໃຊ້ຕ່າງດ້າວທຸກໆກໍຣະນີ ສວ່ນພີ່ນອ້ງລາວທັງຫລາຍເລົ່ານັ້ນ ກໍ່ຍັງຄອງຄອຍຈາກການປົດແອກເຫລກອອກຈາກຄໍຢູ່ແລ້ວແລະຊອກຫາຄວາມຊວ່ຍເຫລືອອັນມີສິນທັມ ຈາກແຜ່ນດິນແມ່ຢູ່ ກໍຄື ລາວນັ້ນເອງ

ປະເທສລາວເປັນຂອງຄົນລາວໝົດທຸກຄົນ ໂດຍບໍ່ມີການແບ່ງແຍກ

ເຊື້ອຊົ້ນເຜົ່າພັນວັນນະ ພວກເຮົາມີສິດຢູ່ໄດ້ເໝືອນກັນທຸກຄົນໃຜຈະມາກີດກັ້ນຕ້ອງມີສິດແກ້ໄຂຊ່ວຍກັນບໍ່ວ່າໃນກໍຣະນີໃດໆຂ້າພະເຈົ້າມີຄວາມພາກພູມໃຈນຳທ່ານທີ່ມີຄວາມຮັກຊາຕແລະຮັກຄົນລາວດ້ວຍກັນແລະມີຈຸດໝາຍປາຍທາງອັນດຽວກັນແຕ່ຂ້າພະເຈົ້າຄິດວ່າຂ້າພະເຈົ້າໄດ້ພາທ່ານເດີນຕາມເສັ້ນທາງ ຂອງອົງພຣະສັມມາສັມພຸທທະເຈົ້າ ສະນັ້ນຂ້າພະເຈົ້າຈຶ່ງຂໍອະນຸໂມທະນາຣຽກຣອ້ງມາຍັງ ກຸ່ມການເມືອງທັງຫລາຍ ບໍ່ວ່າທັງໃນປະເທສແລະນອກປະເທສພໍ່ແມ່ພີ່ນ້ອງອາວອາປ້າລູງພອມຄຣູບາອາຈານພຣະສົງອົງເນນນັກປັນຍາຊົລ ນັກສະແດງບັນດິດທັງຫລາຍບໍ່ວ່າຈະຢູ່ແຫ່ງຫົນຕຳບົລໃດພາຍໃນແລະຕ່າງປະເທສທີ່ມີຄວາມຮູ້ຄວາມສາມາດດ້ານໃດແລະຂັ້ນໃດ ຫຼືບໍ່ມີຄວາມຮູ້ກໍດີຂໍພຽງແຕ່ມີນ້ຳໃຈຮັກຊາຕຮັກຄວາມເປັນລາວ ໃຫ້ພິນິດພິຈາຣະນາເບິ່ງໃຫ້ທີ່ຖ້ວນ ວ່າພຣະພຸດທະເຈົ້າເປັນສາສດາຈານເອກຂອງໂລກແລະມີຄຳສອນເໜືອເທວະດາແລະມະນຸສ ດັ່ງນັ້ນທ່ານຈຶ່ງກະຣຸນາພະຍາຍາມ ຫັນໜ້າເຂົ້າມາປຸ້ມລຸມສາມະຄີປອງດອງຮັກແພງກັນ ເພື່ອກອບກູ້ອິສຣະພາບບັ້ນທ້າຍຂອງພວກເຮົາ ໂດຍນຳເອົາທັມຂອງອົງພຣະສັມມາສັມພຸທທະເຈົ້າມາປົກຄອງປະເທສລາວ ເພື່ອໃຫ້ຊື່ສຽງຂອງລາວໄດ້ຍືນຍົງຄົງຕົວ ໃນປົນແຜ່ນທີໂລກໄປຊົ່ວກາຣະນານ ຂໍຂອບໃຈນຳເພື້ອນຮ່ວມຊາຕເປັນຢ່າງສູງ ( ຂ້າພະເຈົ້າຂໍວິງວອນສິ່ງສັກສິດໃນສາກົລໂລກນີ້ ພອ້ມດ້ວຍຄຸນພຣະສຣີຣັຕະນະໄຕທັງແກ້ວສາມປະການຈົ່ງມາຄຸ້ມຄອງພວກພີ່ນ້ອງຄົນລາວທຸກໆທ່ານເທີ້ນ ) ດ້ວຍຄວາມນັບຖືສ່າງສູງ

ຂບວນການລາວອິສຣະໃໝ່ໃນຣະບອບປະຊາທິປະໄຕ

<u>ຕັ້ງນະໂຍບາຍ ຄັ້ງວັນທີ-2-7-02</u>

<u>ນະໂຍບາຍສ້າງຊາຕຂອງຂບວນການລາວອິສຣະໃໝ່</u>

<u>ເພື່ອປະຊາທິປະໄຕ ມີດັ່ງຕໍ່ລົງໄປນີ້</u>

<u>1)ມີສິນທັມ</u> ພວກເຮົາຕອ້ງມີສິນທັມປະຈຳໃຈຂອງແຕ່ຣະບຸກຄົນ ບໍ່ວ່າຈະແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກວັຍ ຄວນມີຄວາມອອ່ນນອ້ມຖອ່ມຕົນ

ເວົ້າຈາອ່ອນຫວານມີຈິດໃຈເຍືອກເຢັນສຸຂຸມລຸ່ມເຫລິກມີຄຸນສົມບັດອັນດີ ມີກິຣິຍາມາຣະຍາດຮຽບຮູ້ ຮູ້ຈັກບຸນຄຸນເຄົາຣົບນັບຖືຜູ້ເປັນບິດາມານດາ ຄູບາອາຈານແລະເພື້ອນມະນຸສດ້ວຍກັນໃຫ້ມີຄວາມຊື່ສັດສຸຈຣິດຕໍ່ກັນແລະ ກັນໃຫ້ມີຄວາມເມຕຕາປານີຮັກໄຄ່ຕໍ່ທຸກໆຊີວິດໃນໂລກ ໃຫ້ມີຄວາມຮັກຊາຕ ສລາດເປັນທັມ ບໍ່ຖືຍົດຖາບັນດາສັກໃດໆບໍ່ມີຄວາມອິດສາຣິສຍາບັງບຽດ ໃຫ້ມີແຕ່ຄວາມດີ ໃຫ້ອະໂຫສິກັມຊຶ່ງກັນແລະກັນອັນຈະນຳພາຄວາມສງົບສຸຂ ມາສູ່ໂລກນີ້ ຕາມເສັ້ນທາງມັຊຊິມາປະຖິປະທາ ຄືທາງສາຽກາງ-ບໍ່ເຄັ່ງ ບໍ່ຍານເກີນໄປແລະບໍ່ໃຫ້ຍານຈົ່ນເກີນໄປຢ່າງໃຫ້ຖືກຕອ້ງແລະເປັນທັມ

ຄຳອະທິບາຍ ການສ້າງສາປະເທສ ຕອ້ງສ້າງຄົນໃຫ້ເປັນຄົນດີມີສິນທັມ ກ່ອນ ຈຶ່ງເລືອກເອົາຄົນດີມີສິນທັມມາປົກຄອງປະເທສໃຫ້ໄດ້ພາປະເທສຊາຕ ບ້ານເມືອງມີຄວາມຈະເຣີນຮຸ່ງເຮືອງໄປພອ້ມໆກັນ ປະຊາຊົນມີແຕ່ຄວາມ ສຸຂສົມຫວັງໃນຊີວິດ ແລ້ວບໍ່ຄິດຢາກຈະຂ້າຟັນລັນແທງກັນ ເພາະທຸກຄົນມີ ສິນທັມປະຈຳໃຈຈຶ່ງຈະພາໃຫ້ໂລກນີ້ແຈ່ມໃສໄປຊົ່ວກາຣະນານ ໃນການສ້າງ ປະເທສບໍ່ແມ່ນຈະສ້າງແຕ່ວັດຖຸຢ່າງດຽວ ພວກເຮົາຕອ້ງສ້າງ ຈິດໃຈນຳ ຄື ສ້າງຄົນໃຫ້ເປັນມະນຸສ

2)ມີຄວາມຍຸຕິທັມ ພວກເຮົາຄວນມີຄວາມຍຸຕິທັມຕໍ່ກັນແລະກັນ ໃນການປົກ ຄອງຊາຕ ບໍ່ວ່າຈະແມ່ນຊົນຊາຕໃດ-ຊົນເຜົ່າໃດແລະທຸກເພດທຸກໄວ ຄວນມີ ຄວາມຊື່ສັດສຸຈຣິດຕໍ່ໜ້າທີ່ການງານບໍ່ມີການສໍ້ຣາຊບັງຫລວງສໍ່ຫລວງບັງ ຣາຊ ຍາດອຳນາດຂອງປະຊາຊົນບໍ່ເຫັນແກ່ຕົວບໍ່ເຫັນແກ່ຍາດຕິພີ່ນອ້ງເພື້ອນ ມິດສະຫາຽ ບໍ່ມີການຫລີ້ນພັກຫລີ້ນພວກບໍ່ມີການກິນສິນບົນຊື້ຈ້າງຈອບອອຽ ບໍ່ອຽ່ງຊ້າຽບໍ່ອຽ່ງຂວາບໍ່ວ່າຈະຢູ່ໃນໂຮງສານ ດ້ານການຕັດສິນຄະດີທຸກລະ ດັບຂັ້ນ ບໍ່ວ່າຈະຢູ່ໃນກະຊວງທະບວງກົມຕ່າງໆແລະສະຖານທີ່ອື່ນໆໃນສັງຄົມ ເຮົາມີຄວາມຍຸຕິທັມປະຈຳໃຈຕໍ່ກັນແລະກັນ ຢ່າງຖືກຕອ້ງແລະເປັນທັມ

ຄຳອະທິບາຍ ການປົກຄອງປະເທສຫາກມີການສໍ້ໂກງກິນສິນບົນ ມີແຕ່ຄວາມ ເຫັນແກ່ຕົວບໍ່ເຫັນແກ່ຊາຕບ້ານເມືອງຫຼືປະຊາຊົນ ປະເທສຊາຕ

*ກໍ່ມີແຕ່ຄວາມທຸກຈົນລ້າຫລັງ ມີແຕ່ຖືກຊາຕອື່ນດູມິ່ນປມາດເປັນການອັບ ອາຽຂາຽໜ້າຕໍ່ຊາວ ໂລກ ປຽບສະເໝືອນຄົນລາວເຮົາບໍ່ມີຫົວໃຈ ບໍ່ມີສະ ຕິປັນຍາສ້າງປະເທສຊາຕຂອງຕົນ ຍາມໃດກໍ່ຈະຄອງຄອຽຖ້າແຕ່ຊາຕອື່ນ ມາຊວ່ຽແກ້ໃຂ ແລະຕົນເປັນທີ່ເພິ່ງຂອງຕົນຢູ່ທີ່ໃດ (ອັຕະຫິອັຕະ ໂນນາໂຖ ) ເຮົາຕອ້ງເປັນຄົນເພິ່ງຕົນເອງ-ເລີກຈາກການສໍ້ ໂກງສາ-ມະນຸສເອີຍ*

*<u>3)ມີມະນຸສທັມ</u> ພວກເຮົາຕອ້ງມີມະນຸສທັມປະຈໍາໃຈຂອງໃຜລາວ ບໍ່ວາ່ຈະ ແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກໄວ ເຮົາຄວນມີນໍ້າໃຈຮັກທໍ່ເຄົາ ຣົບນັບຖືສິດທິເພື້ອນມະນຸສດວ້ຽກັນ ເພາະພວກເຮົາເກີດມາເປັນມະນຸສ ກໍ່ ມີຮູບຮາ່ງລັກສະນະຄາ້ຽຄືກັນ -ມີຫູມີຕາມີດັງມີລີ້ນມີກາຍມີໃຈ ແລະມັນ ສມອງ ແຕ່ວາ່ພວກເຮົາຍັງໄດ້ຢູ່ຮວ່ມ ໂລກດຽວກັນສິ່ງທີ່ດີຫຼືຊົ່ວຜິດຫຼືຖືກນັ້ນ ພວກເຮົາຄວນພິນິດພິຈາຣະນາ ຜອ່ນສັ້ນຜອ່ນຍາວໃຫ້ອະ ໂຫສິກັນໃຫ້ກັນ ພວກເຮົາບໍ່ຄວນໃຊ້ອໍານາດປາ່ເຖື່ອນຜເດັດການ ຈົ່ນເກີນເຫດຕໍ່ມະນຸສ ດວ້ຽກັນ ພວກເຮົາຄວນເຊື່ອຟັງໃນສິ່ງທີ່ດີມີເຫດຜົນ ບໍ່ມີການຂູດຮີດບີບບັ້ ອັ່ນຂູ່ອັ່ນເຫັງ ແລະແຕະຕອ້ງຮາ່ງການກັນຈົ່ນເລືອດຕົກຢາງອອກ ບໍ່ວາ່ ໃນກໍຣະນີໃດໆພວກເຮົາຄວນຣະນຶກເຖິງສັນຊາຕວິນຍານ ຂອງຄວາມເປັນ ມະນຸສດວ້ຽກັນແລະມີມະນຸສສະທັມຕໍ່ກັນແລະກັນຢາ່ງຖືກຕອ້ງແລະເປັນທັມ*

*<u>ຄໍາອະທິບາຍ</u> ມະນຸສເຮົາມີສີ່ຢາ່ງດວ້ຽກັນ ຄື*

*1-ມະນຸສສະມະນຸສ ໂສ ຄື ການເປັນມະນຸສແລະໃຈກໍ່ເປັນມະນຸສ*

*2-ມະນຸສສະເດັຽຣັຈສາ ໂນຄືການເປັນມະນຸສແລະໃຈເປັນສັດເດັຽຣະສານ*

*3-ມະນຸສສະເທ ໂວ ຄື ການເປັນມະນຸສໃຈເປັນເທວະດາ*

*4-ມະນຸສສະເປ ໂຕ ຄື ການເປັນມະນຸສແລະໃຈເປັນເຜດເປັນມານເຖິງຢາ່ງ ໃດກໍ່ຕາມຄົນເຮົາເກີດມາຕາ່ງກັນທີ່ຊາຕແລະພາສານອກເໜືອກວາ່ນັ້ນບໍ່ ມີ ໃຫ້ທາ່ນລອງຟັງສຽງຮອ້ງໃຫ້ຫຼືຫົວເລາະເບິ່ງດູ ການຫລັບນອນຫຼືຢູ່ກິນກໍ່ ບໍ່ຜິດແປກກັນແມ່ນແຕ່ນອ້ຽດຽວເລີຍ ແຕ່ເປັນຫຍັງມະນຸສເຮົາຈຶ່ງຕອ້ງ ມີການອິດສາຣິສຍາ ຄອຽບຽດບຽນຊຶ່ງກັນແລະກັນ*

ແລະຫາຜົລປະໂຍດ ຈາກກາຣປະຫັກປະຫາຣກັນບໍ່ມີເລີຍ ພວກເຮົາບໍ່ຮູ້ຮັກມະນຸສດ້ວຽກັນ ພວກເຮົາຈະຄ່ອຽຮັກໃຜອີກ ແຕ່ສັດເດັຽຣະສານມັນກໍ່ຍັງຮູ້ຮັກກັນ ເຊັ່ນໄກ່ແມ່ລູກອ່ອນ ໝາແມ່ລູກອ່ອນເປັນຕົ້ນ

<u>4)ມີມະນຸສສັມພັນ</u> ພວກເຮົາຕ້ອງມີມະນຸສສັມພັນປະຈຳໃຈ ບໍ່ວ່າຈະແມ່ນຊົນຊາຕໃດ ຊົນເຜົ່າໃດແລະທຸກເພດທຸກໄວ ພວກເຮົາທຸກຄົນຄວນເປັນມິດກັນແລະເປັນມິດກັບທຸກໆປະເທສໃນໂລກ ບໍ່ວ່າຈະເປັນປະເທສທີ່ຖືຣະບອບຄອມມູນິສ ຣະບອບເສຣີນິຍົມແລະຣະບອບບໍ່ຮ່ວມກຸ່ມ ພວກເຮົາຕ້ອງຜູກສາຍສັມພັນເປັນມິດທີ່ດີ ໂດຽທາງກາຣມີກາຣຕິດຕໍ່ລົງທຶນຄ້າຂາຍຮ່ວມກັນ ມີກາຣຮ່ວມມືໃນກາຣສ້າງສາພັທະນາປະເທສຊາຕ ໂດຽບໍ່ມີເງື່ອນໄຂແລະ ບໍ່ຜູກມັດໃດໆຈົ່ນເກີນໄປ ຕ້ອງມີກາຣໄປມາຫາສູ່ກັນຖານເປັນມະນຸສຮ່ວມໂລກ ພວກເຮົາຄວນເຄົາຣົບນັບຖືສັດຈະວາຈາ ທີ່ມີຕໍ່ກັນຢ່າງຖືກຕ້ອງແລະເປັນທັມ

<u>ຄຳອະທິບາຍ</u> ມະນຸສເຮົາຖ້າບໍ່ມີກາຣພົວພັນຕິດຕໍ່ກັນກໍ່ຄືຄວາມເມີນເສີຍແລະ ບໍ່ເຂົ້າໃຈກັນເປັນມິດກັນບໍ່ໄດ້ ຜົນສຸດທ້າຍກໍ່ມີກາຣທະເລາະວິວາດກັນແລະ ທຳສົງຄາມແບ່ງແຍກກັນ ຕ່າງຄົນຕ່າງສະແດງຄວາມຍິ່ງໃຫ່ຽໄວ້ກຽດບໍ່ຣົດຖິດຖີມານະເບ່ງຣັດສະໝີຂອງຄວາມອາຫັງກາ ແລ້ວມາທ້າທາຍຕໍ່ເພື່ອນມະນຸສໂດຍບໍ່ມີສິນທັມຕິດຕົວ ສະນັ້ນພວກເຮົາຈຶ່ງມີກາຣຕິດຕໍ່ພົວພັນໃຫ້ເຂົ້າໃຈເປັນມິດກັນທຸກໆຄົນແລະທຸກໆປະເທສໃນໂລກ

<u>5)ມີເສຣີພາບ</u> ພວກເຮົາຕ້ອງມີສິດເສຣີພາບທຽບເທົ່າກັນບໍ່ວ່າ ຈະແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກໄວ ຈະເປັນຣະບົບກາຣເມືອງເສຖກິດ ສັງຄົມ ແລະວັທະນະທັມເຮົາຄວນມີສິດດັ່ງນີ້ ຄື 1-ມີສິດທິໃນກາຣປາກເວົ້າ -2-ມີສິດທິໃນກາຣເລືອກຕັ້ງ-3-ມີສິດທິໃນກາຣຮັບສມັກເລືອກຕັ້ງ-4-ມີສິດທິໃນກາຣເປັນເຈົ້າຂອງຕົນເອງ-5-ມີສິດທິໃນກາຣເປັນເຈົ້າຂອງຊັບສົມບັດ-6-ມີສິດທິໃນກາຣລົງທຶນຄ້າຂາຍຕ່າງໆ ຢ່າງຖືກຕ້ອງ-7-ມີສິດທິໃນກາຣປະດິດຄິດສ້າງອັນຖືກຕ້ອງ

8-ມີສິດທີ່ໃນການໄປມາຫາສູ່ກັນເປັນເພື່ອນຢ່າງສະບາຍແລະບໍ່ຫາຄວາມ ອາຄາດບາດໝາງໃສ່ກັນ -9-ມີສິດທີ່ອື່ນໆອີກທີ່ຖືກຕ້ອງແລະເປັນທັມ

<u>ຄຳອະທິບາຍ</u> ທຸກຄົນກໍ່ຮູ້ແກ່ໃຈຢູ່ວ່າສິດເສຣີພາບ ເຮັດຫຍັງກໍ່ໄດ້ຕາມໃຈ ມັກແຕ່ຖ້າຫາກເກີນຄວາມພໍດີ ບໍ່ມີກົດໝາຍບັງຄັບບັນຊາ ໂລກນີ້ກໍ່ຈະວຸ້ນ ວາຍໄປໝົດ ຜູ້ນັ້ນກໍ່ມີສິດ ຜູ້ນີ້ກໍ່ມີສິດແຕ່ຖ້າມີສິດນອກຂອບເຂດ ຫາ ຄວາມພໍດີໄດ້ຍາກ ໂລກນີ້ຈະບໍ່ກາຍເປັນໂລກຂອງໂລກໃໝ່ ສະນັ້ນ ພວກເຮົາຄວນໃຫ້ສິດກັນ ມີຂອບເຂດຢ່າງຖືກຕ້ອງແລະເປັນທັມ

<u>6)ມີປະຊາທິປະໄຕ</u> ພວກເຮົາຕ້ອງມີປະຊາທິປະໄຕທົ່ວປະເທສ ໃນທຸກໆ ກໍຣະນີບໍ່ວ່າຈະແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກໄວ ຄວນມີ ສິດປ່ອນບັດເລືອກເອົາຜູ້ນຳຂອງຕົນ ແຕ່ຂັ້ນລຸ່ມຫາຂັ້ນເທິງ ໂດຍເອົາຄະ ແນນສຽງສ່ວນຫລາຍ ສ່ວນການປົກຄອງຈະມີສອງຣະບົບ ຄື ສະພາຕ່ຳ ໄດ້ແກ່ສະພາປະຊາຊົນແລະສະພາສູງສຸດ ໄດ້ແກ່ສະພາຣັຖບາລ ການປົກ ຄອງຈະມີສອງພັກການເມືອງ ຄືພັກຝ່າຍນຳແລະພັກຝ່າຍຄ້ານ ທັງສອງ ນີ້ຈະຕ້ອງເດີນຕາມເສັ້ນທາງ ຂອງຣະບອບໃໝ່ປະຊາທິປະໄຕຂອງ ຂບວນການລາວອິສຣະ ຄືເອົາສິນທັມເປັນຫລັກ ການປົກຄອງຂັ້ນລຸ່ມຈາກ ຂັ້ນບ້ານຫາຂັ້ນແຂວງ ຈະມີການເລືອກຕັ້ງທຸກໆສອງປີແລະການປົກຄອງຂັ້ນ ເທິງ ຄືນາຍົກຣັຖມົນຕຣີແລະຣັຖມົນຕຣີກະຊວງຈະມີການເລືອກຕັ້ງທຸກໆສີ່ປີ ແລະທຸກໆຣະບົບການປົກຄອງທົ່ວປະເທສ ບໍ່ວ່າເສຖກິດສັງຄົມແລະວັທນະທັມ ກໍ່ມີປະຊາທິປະໄຕໃຫ້ທົ່ວເຖິງ ບໍ່ເວັ້ນແມ່ນແຕ່ການປົກຄອງດ້ານສັງຄົມ ເຊັ່ນ ໃນໂຮງຈັກໂຮງງານ ວິສະຫະກິຈສ່ວນຕົວແລະອື່ນໆອີກ ກໍ່ມີປະຊາທິປະໄຕ ຢ່າງຖືກຕ້ອງແລະເປັນທັມ

<u>ຄຳອະທິບາຍ</u> ປະຊາທິປະໄຕຄືເອົາສຽງສ່ວນຫລາຍຂອງປະຊາຊົນ ເພື່ອໃຫ້ ມີຄວາມຍຸຕິທັມແລະກ້າເກິ່ງ ຕ້ອງມີຫລາຍພັກການເມືອງເພື່ອໃຫ້ຖືກໃຈ ຂອງປະຊາຊົນແລະໄດ້ເລືອກຕາມໃຈມັກ ສະນັ້ນຈຶ່ງໄດ້ມີສອງພັກການເມືອງ ໃຫ່ຍ ເພາະວ່າຄົນເຮົາເກີດມາມັກຄົນລະຢ່າງຫຼືມັກບໍ່ຄືກັນ

ສົມມຸດວ່າມີພັກການເມືອງດຽວປະຊາຊົນກຸ່ມໃດກຸ່ມໜຶ່ງບໍ່ພໍໃຈກໍ່ເກີດຄວາມຂັດແຍ່ງກັນບໍ່ເລີກບໍ່ລາແລ້ວຈັກເທື່ອ ປະຊາຊົນທົ່ວປະເທສມັກຝ່າຍໃດ ກໍ່ເລືອກຝ່າຍນັ້ນຕາມໃຈມັກ ຝ່າຍໃດຊະນະຄະແນນສຽງກໍ່ປົກຄອງປະເທສຕາມກຳນົດການແລະເວລາ ຝ່າຍໃດທີ່ເສັຽໃຊໃນການເລືອກຕັ້ງກໍ່ຄອ່ຽຈັບຕາມອງເປັນຝ່າຍຄ້ານໃນການກະທຳທີ່ບໍ່ຖືກຕ້ອງຂອງຣັຖບານປັດຈຸບັນ ໃນຕໍ່ໜ້າກໍ່ມີຝ່າຍໃດຝ່າຍໜຶ່ງສະຫລາຽຕົວນັ້ນ ກໍ່ຂຶ້ນກັບຄວາມນິຍົມຊົມຊອບຂອງປະຊາຊົນເປັນຜູ້ຕັດສິນຊີ້ຂາດອັນນີ້ຈຶ່ງແມ່ນປະຊາທິປະໄຕແທ້ 100%

<u>7)ມີສິດສເມີພາບ</u> ພວກເຮົາຕ້ອງມີສິດສເມີພາບກັນ ບໍ່ວ່າຈະແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກໄວ ຄວນມີສິດສເມີພາບກັນລະຫວ່າງ ຜູ່ຍິງມີສິດທຽບເທົ້າກັບຜູ່ຊາຍ ຜູ້ນ້ອຽມີສິດທຽບເທົ້າກັບຜູ້ໃຫ່ຽໃນທຸກກໍຣະນີ ບໍ່ວ່າດ້ານສິດສ່ວນຕົວຫຼືດ້ານວຽກງານແລະການທຳມາຫາກິນວຽກງານໃນດ້ານການປົກຄອງດ້ານເສຖກິດສັງຄົມແລະວັທນະທຳ ກໍ່ມີສິດສເມີພາບເລືອກໄດ້ຕາມໃຈມັກແລະອີງຕາມຄວາມຮູ້ຄວາມສາມາດຂອງຕົນ ແຕ່ມີຄວາມເຄົາຣົບນັບຖືກົດໝາຽນັບຖືກັນຕາມຄຸນວຸນທິຫຼືຜູ້ອາວຸໂສ ພວກເຮົາຄວນມີຄວາມສເມີພາບກັນຢ່າງຖືກຕ້ອງແລະເປັນທັມ

<u>ຄຳອະທິບາຍ</u> ພວກເຮົາເກີດມາເປັນມະນຸດຄືກັນບໍ່ວ່າຜູ້ຍິງຫຼືຜູ້ຊາຍເດັກນ້ອຽແລະຜູ້ໃຫ່ຽ ຕ່າງຊາຕຕ່າງພາສາແລະຜິວພັນສັນສີ ຕ່າງແນວຄິດຈິດໃຈແຕ່ບໍ່ຄວນເອົາລັດເອົາປຽບກັນຄວນໃຫ້ກຽດແລະສັກສີ ຂອງຄວາມເປັນມະນຸສໃຫ້ສິດທິຕໍ່ກັນແລະກັນຕາມສົມຄວນ ແຕ່ຕ້ອງນັບຖືຕາມຊັ້ນແລະໜ້າທີ່ເມື່ອໃຫ້ສິດທຽບເທົ້າກັນແລ້ວ ຈະຕືລວດກວດພຽງບໍ່ໄດ້

<u>8)ມີເອກພາບ</u> ພວກເຮົາຕ້ອງມີຄວາມເປັນເອກພາບກັນ ບໍ່ວ່າຈະແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກໄວ ເຮົາຄວນມີເອກພາບກັນໂດຍບໍ່ມີການແຍກຊັ້ນວັນນະຜິວພັນສັນສີ ເຮົາຄວນຕົກລົງເປັນເອກສັນກັນແລະເລືອກເອົາແຕ່ສິ່ງດີໆ ມີຄວາມຍຸຕິທັມແກ່ທຸກຄົນ ບໍ່ວ່າຈະເປັນການປົກຄອງ ດ້ານເສຖກິດ ສັງຄົມແລະວັທນະທັມກໍ່ໃຫ້ມີເອກພາບກັນ

ເຊັ່ນ ດ້ານພາສາກໍ່ແມ່ນໃຊ້ພາສາກາງ ຄື ພາສາລາວດັ່ງນີ້ເປັນຕົ້ນ ຢ່າງຖືກຕ້ອງແລະເປັນທັມ

<u>ຄໍາອະທິບາຍ</u> ພວກເຮົາບໍ່ມີການແຍກຊັ້ນວັນນະ ຜິວພັນສັນສີ ຈະແມ່ນຄົນໃດມາຈາກໃສແລະຖືສາສນາໃດກໍ່ແມ່ນຄົນລາວຄືກັນ ເຖິງຈະມີແນວຄິດຈິຕໃຈຕ່າງກັນພວກເຮົາກໍ່ຄວນຮັບຮູ້ຊຶ່ງກັນແລະກັນ ແລ້ວຕົກລົງກັນເປັນເອກສັນກັນດ້ວຍຄວາມພິນິສພິຈາຣະນາ ໃຫ້ກ້ຳເກິ່ງທຸກຄົນ ໂດຍມີສິນທັມມະນຸສສະທັມແລະປະຊາທິປະໄຕເປັນເຄົ້າ

<u>9)ມີເອກຣາຊ</u> ພວກເຮົາຕ້ອງມີເອກຣາຊແລະອິສຣະພາບຂອງຕົວເອງ ບໍ່ວ່າຈະແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກໄວ ພວກເຮົາຕ້ອງປົດປ່ອຍແລະປົດແອກອອກຈາກການເປັນທາດຮັບໃຊ້ຂອງຜູ້ອື່ນ ມີສິດທິເປັນເຈົ້າຂອງປະເທສຊາຕຢ່າງເຕັມປຽບ ໂດຍບໍ່ເປັນຫົວເມືອງຂື້ນຂອງຜູ້ໃດແລະບໍ່ເປັນທາດຮັບໃຊ້ຂອງຕ່າງປະເທສ ແລະບໍ່ເອົາຜູ້ໃດມາເປັນລູກແຫລ້ງຕີນມືຫຼືທາດຮັບໃຊ້ ບໍ່ຍອມໃຫ້ຕ່າງຊາຕມາຕັ້ງຖານທັບໃນລາວ ບໍ່ວ່າທາງດ້ານການເມືອງເສຖກິດສັງຄົມແລະວັທນະທັມເຮົາກໍ່ມີເອກຣາຊແລະອິສຣະພາບຂອງຕົວເອງ ຢ່າງຖືກຕ້ອງແລະເປັນທັມ

<u>ຄໍາອະທິບາຍ</u> ການມີອິສຣະພາບເອກຣາຊຂອງຕົວເອງກໍ່ປຽບເໝືອນປາຢູ່ໃນນໍ້າເຢັນ ທີ່ບໍ່ມີໃຜມາກົດຂີ່ຂົ່ມເຫງ ເພາະສະນັ້ນ ລາວຕ້ອງເປັນລາວ ຈະເປັນໃຜຜູ້ອື່ນເປັນໄປບໍ່ໄດ້ ປະຊາຊົນລາວໄດ້ຖືກກົດຂີ່ຂົມເຫງເປັນທາດຂອງຕ່າງດ້າວມານານແສນນານແລ້ວ ປະຊາຊົນລາວມີຄວາມຂົມຂື່ນທໍຣະມານທາງດ້ານຈິດໃຈແລະທາງກາຍຫາອັນປຽບບໍ່ໄດ້ ການຕໍ່ສູ້ເອົາເອກຣາຊກໍ່ຍືດເຍື້ອຍາວນານຈາກຕ່າງດ້າວ ແຕ່ບັນພະບໍຣຸດມາຮອດປັດຈຸບັນກໍ່ຍັງບໍ່ເສັດບໍ່ຊິ້ນໃນການເປັນທາດຂອງຕ່າງດ້າວ ສະນັ້ນພວກເຮົາສົມຄວນທີ່ຈະຍາດເອົາເອກຣາຊແລະອິສຣະພາບໃນບັ້ນທ້າຍຈາກການຍຶດຄອງຂອງຕ່າງດ້າວໃຫ້ສົມບູນ

<u>10)ມີອະທິປະໄຕ</u> ພວກເຮົາຕ້ອງມີອະທິປະໄຕຂອງຕົວເອງ ບໍ່ວ່າຈະແມ່ນຊົນຊາຕໃດ ຊົນເຜົ່າໃດແລະທຸກເພດທຸກໄວເຮົາຕ້ອງມີຄວາມຍິ່ງໃຫ່ຍ

ປົກປັກຮັກສາຊັບສົມບັດຂອງປະເທສທັງໃນໜ້າດິນແລະພື້ນດິນ ຮັກທັງກຽດແລະສັກສີຂອງຄວາມເປັນລາວໄວ້ ບໍ່ໃຫ້ໃຜເຂົ້າມາລົບລູ່ດູມິ່ນປມາດລາວບໍ່ວ່າຈະແມ່ນດ້ານການເມືອງ ດ້ານເສຖກິດສັງຄົມແລະວັທນະທັມທຸກໆ ປະເທສໃນໂລກຕ້ອງນັບຖືອະທິປະໄຕຂອງລາວແລະຮັບຮູ້ແລະຮັບປະກັນ ດິນດອນຕອນຫຍ້າທີ່ຖືກຍຶດຄອງຈາກຕ່າງດ້າວອອ້ມຂ້າງທຸກດ້ານ ຊາວໂລກຕ້ອງນັບຖືອະທິປະໄຕລາວແລະຮັບຮູ້ແລະຮັບປະກັນ ຄວາມມີສິນທັມແລະຄວາມຍຸຕິທັມຂອງລາວ ເພື່ອຄວາມຍືນຍົງຄົງຕົວຂອງປະເທສລາວຕຣອດໄປ ໂດຍບໍ່ມີການຮຸກຮານລ່ວງລ້ຳເຂດນ້ຳແດນດິນບໍ່ມີການແຊກແຊງກິຈະການພາຽໃນຂອງກັນແລະກັນ ດິນດອນຕ່ອນຫຍ້າທີ່ຖືກຍຶດຕອງຈາກຕ່າງດ້າວອອ້ມຂ້າງທຸກໆດ້ານ ຊາວໂລກຕ້ອງຊ່ວຍແກ່ໄຂ ໂດຍບໍ່ມີເງື່ອນໄຂແລະເມື່ອມີການຮຸກຮານໃນທຸກໆກໍຣະນີ ຊາວໂລກຕ້ອງຊ່ວຍປ້ອງກັນແລະໃຫ້ຄວາມຊ່ວຍເຫລືອແກ່ປະເທສລາວຢ່າງຖືກຕ້ອງແລະເປັນທັມ

<u>ຄຳອະທິບາຍ</u> ຍາມໃດຄົນລາວຂອງເຮົາກໍ່ບໍ່ຄ່ອຽຈະມີສິດຂອງຕົວເອງ ໃນການປົກຄອງຮັກສາເຂດນ້ຳແດນດິນແລະຊັບສົມບັດພັຕະຖານກໍ່ເພາະມີກຳລັງອອ່ນແອແລະເທກນິກກໍ່ຕ່ຳ ປະຊາຊົນໃນປະເທສມີການສຶກສາບໍ່ທົ່ວເຖິງແລະຖືກດອກລວງໄດ້ງ່າຍ ດັ່ງນັ້ນລາວຈຶ່ງມີການແຊກແຊງຈາກພາຽນອກບໍ່ວ່າທາງຕົງແລະທາງອອ້ມ ອີກກໍຣະນີນຶ່ງປະເທສລາວບໍ່ມີທາງອອກສູ່ທະເລ ເພື້ອນບ້ານໃກ້ຄຽງຈຶ່ງຄ່ອຽຂູດເນື້ອເຖືອໜັງຂົນເທງເຕງເຕກເອົາປຽບເອົາລັດສເມີນາ ຄວາມຍິ່ງໃຫ່ຽຂອງຄວາມເປັນລາວບໍ່ມີ ສະນັ້ນກໍ່ສົມຄວນແລ້ວທີ່ພວກເຮົາຈະຕື່ນຕົວຕື່ນໃຈ ມາຮັບຮູ້ຄວາມຍິ່ງໃຫ່ຽຂອງຕົນເພື່ອປົກປັກຮັກສາເຂດນ້ຳແດນດິນແລະກຽດສັກສີຂອງລາວໄວ້ຊົ່ວກາລະນານ

<u>11)ມີອັຕຕະສາມະຄີທັມ</u> ພວກເຮົາຕ້ອງມີຄວາມສາມະຄີປອງດອງຮັກແພງຊ່ວຍເຫລືອກັນແລະກັນ ບໍ່ວ່າຈະແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກໄວ ຄວນມີຄວາມສາມະຄີສ້າງສາພັທນາປະເທສ ໃຫ້ຈະເຣີນຮຸ່ງເຮືອງທຽບເທົ້າກັບໂລກທີ່ພັທນາ ຄືພາກັນສ້າງສາຖນົນຫົນທາງ ໂຮງໝໍໂຮງຮຽນ

ວັດວາອາຮາມແລະປັບປຸງຊົນນະບົດໃຫ້ທົ່ວເຖິງໃຫ້ມີນ້ຳໃສໄຫລໄຟສວ່າງ ບໍ່ວ່າຈະເປັນດ້ານການປົກຄອງ ດ້ານເສຖກິດສັງຄົມແລະວັທນະທັມກໍ່ບຸກເບີກດ້ວຍເຮື່ອແຮງແລະນ້ຳໃຈອັນບໍຣິສຸດ ທັງສະຖານທີ່ສາທາລະນະແລະສ່ວນຕົວ ກໍ່ໃຫ້ມີຄວາມສະອາດງາມຕາ ຂອງຊາວໂລກແລະເປັນລະບຽບຮຽບຮ້ອຍ ຢ່າງຖືກຕ້ອງແລະເປັນທັມ

<u>ຄຳອະທິບາຍ</u> ຄວາມສາມະຄີປອງດອງ ເປັນບໍ່ເກີດຂອງຄວາມຈະເຣີນຂອງຊາຕ ເພາະສະນັ້ນເຮັດຫຍັງກໍ່ຕ້ອງມີຄວາມສາມະຄີທຸ້ມເທ ເຮື່ອແຮງທັງວັດຖຸແລະຈິດໃຈສ້າງສາພັທນາປະເທສຊາຕ ດ້ວຍຄວາມບາກບັນບໍ່ວ່າຈະເປັນຂອງສາທາລະນະແລະສ່ວນຕົວ ກໍ່ສາມະຄີປອງດອງປັບປຸງເສຖກິດພື້ນຖານ ຄື ເຄື່ອງອຸປໂພກບໍຣິໂພກລາວເຮັດລາວໃຊ້ລາວໄດ້ລາວຈະເຣີນບໍ່ຫວັງຄອງຄອຍແຕ່ຊາຕອື່ນມາສ້າງສາປະເທສໃຫ້ເຮົາ ຄັນລາວເຮົາມີຄວາມສາມະຄີເປັນນ້ຳນຶ່ງໃຈດຽວກັນ ກໍ່ສາມາດສ້າງປະເທສໃຫ້ຈະເຣີນຮຸ່ງເຮືອງທຽບກັບໂລກອື່ນໄດ້ຢ່າງສະບາຍ ບໍ່ວ່າຈະສ້າງປະເທສທີ່ນີ້ແມ່ນມີອຸປສັກຢ່າງອື່ນກໍ່ເອົາຕົວລອດໄດ້ຍ້ອນຄວາມສາມະຄີ ຄວາມສາມະຄີຄືການຂຍາຍແນວຄິດວິວັທນາການຕໍ່ ຄື ອ້າຍຮູ້ສອງນ້ອງຮູ້ນຶ່ງປະກອບກັນຈຶ່ງຈະສຳເຣັດ

<u>12)ມີຄວາມເອື້ອເຟື້ອ</u> ພວກເຮົາຕ້ອງມີນ້ຳໃຈເອື້ອເຟື້ອເພື່ອແຜ່ຕໍ່ກັນແລະກັນ ບໍ່ວ່າຈະແມ່ນຊົນຊາຕໃດຊົນເຜົ່າໃດແລະທຸກເພດທຸກໄວ ຄວນມີນ້ຳໃຈໄມຕຣີຕິດແທບເປັນເພື່ອນມິດທີ່ດີເພື່ອຊ່ວຍເຫລືອຊຶ່ງກັນແລະກັນ ດ້ວຍຄວາມບໍຣິສຸດຜຸດຜ່ອງ ຂຶ້ນເຮືອນໄຕ້ໄດ້ເກືອ ຂຶ້ນເຮືອນເໜືອໄດ້ເຂົ້າ ທັງຄວາມເວົ້າໃຫ້ກ່ອມກັນ ຍາມຂັດສົນຈົນໃຈມີເຫດຮ້າຍຫຼືໄພທຳມະຊາຕກໍ່ຊ່ວຍກັນໄດ້ ເຊັ່ນ ນ້ຳຖ້ວມ ແຜ່ນດິນໄຫວ ໄຟໄໝ້ ລົມພະຍຸ ດັ່ງນີ້ເປັນຕົ້ນ ພວກເຮົາຄວນມີຄວາມເອື້ອເຟື້ອເພື່ອແຜ່ບໍຣິຈາກຊັບສົມບັດປັດໃຈທັງສີ່ນັ້ນມີຄື ທີ່ຢູ່ອາໃສ ເຄື່ອງໜຸ່ງຫົ່ມ ຢາປົວພະຍາດແລະອາຫານການກິນຈາກໜ່ວຍປະຊາສົງເຄາະ ຫຼືສ່ວນບຸກຄົນແກ່ເພື່ອນມະນຸສດ້ວຍກັນ ຢ່າງຖືກຕ້ອງແລະເປັນທັມ

ຄຳອະທິບາຍ ປະຊາຊົນລາວທົ່ວປະເທສ ມີນິໄສໃຈຄໍໂອບອ້ອມອາລີ

ມີນ້ຳໃຈເອື້ອເຟື້ອເພື່ອແຜ່ຕໍ່ເພື່ອນມະນຸສແລະສັດທັງຫລາຽ ເປັນຄົນບໍ່ອິດສະ
ນີ່ ມີນຳໃຈໄມຕຣີ ມັກງ່າຍເອົາໃຈຄົນອື່ນບໍ່ມັກບຽດບຽນໃຜ ຄົນລາວສ່ວນ
ຫລາຽຖືສາສນາພຸທປະຕິບັດຮີດຄອງປະເພນີຢ່າງເຄັ່ງຄັດເພື່ອບໍ່ໃຫ້ຣະເຫລີງ
ແລະເສື່ອມເສັຽຄວາມງາມຂອງວັທນະທັມ ລາວພວກເຮົາຄວນຊ່ວຽກັນຮັກ
ສາໄວ້ ຕຣອດການລະບານ ( ໝາຽເຖີງປັດໃຈສີຢ່າງນັ້ນເອງ )

<u>13)ມີກັມມະບົດສິບ</u> ພວກເຮົາຄວນມີການຢັບຢັ້ງທາງການວາຈາແລະໃຈ
ເພື່ອບໍ່ຣະເມີດສິດທິມະນຸສອັນຈະເກີດການທະເລາະວິວາດ
ໃນທຸກແຫ່ງຫົນ ຕຳບົນເໜືອໄຕ້ ໃນສັງຄົມເຮົາຄວນມີ ຄື

ກ -ກາຍສຸຈຣິດ ບໍ່ມີການຂ້າຟັນລັນແທງທຳຮ້າຽຮ່າງການກັນ ມະນຸສຜູ້ໃດທີ່
ກ້າວຂາເຂົ້າມາເມືອງລາວແລ້ວ ໃນຄຳວ່າຕາຍບໍ່ມີ ມີແຕ່ຄວາມປອດໄພ
ແລະໃຫ້ຄວາມເປັນທັມທຸກໆປະການ -ບໍ່ມີການລັກຊັບສົມບັດຂອງຜູ້ອື່ນຫຼືບໍ່
ມີການປຸ້ນຈີ້ກັນ ແມ່ນແຕ່ຂອງຕົກເຮັ່ຽເສັຽຫາຽໃນທາງ ກໍ່ບໍ່ເກັບເອົາມາເປັນ
ຂອງຕົວເອງ ມີນ້ຳໃຈສະອາດບໍຣິສຸດ -ບໍ່ມີການຫລີ້ນຊູ້ຊູເມັຽທ່ານຫຼືຜົວທ່ານ
ອັນຜິດຮີດຄອງປະເພນີບໍ່ມີເສບເມຖຸນກິນສຸຣາເມໄລຈົນເກີນໄປ
-ບໍ່ມີຄ້າຂາຽຂອງເທື່ອນຫຼືອົ່ມຂືນສຳເນົາແລະຂາຽຕົວເປັນໂສເພນີ

ຂ -ວາຈີສຸຈຣິດ ບໍ່ມີການເວົ້າຕົວະດອກລວງຍົວະຍົງສົ່ງເສີມທຳຮາຽຈິດໃຈ
ຂອງຜູ້ອື່ນໃຫ້ຫລົ້ມຈົມ -ບໍ່ມີການເວົ້າໃສ່ສັບສໍ່ສຽດສີຫຼືເວົ້າຂວັນນິນທາກາເລ
ລັບຫລັງ -ບໍ່ມີການເວົ້າຄຳຫຍາບຊ້າດ່າປອັຽແຊ່ງເວນ -ບໍ່ມີການເວົ້າ
ຄຳເປີ້ຍເຈີ້ຍ ຖແລງແປງຄວາມອັນບໍ່ມີຄວາມຈິງ

ຄຳອະທິບາຍ ສຳລັບຂໍ້ກັມມະບົດສິບນີ້ປະກອບດວ້ຽສິນທຳແລະການ
ປະຕິບັດທາງການວາຈາແລະໃຈ ອັນຈະນຳພາຄົນຊົ່ວການມາເປັນຄົນດີ
ແລະປະເທສຊາຕຂອງລາວເຮົາ ກໍ່ຈະກາຽມາເປັນແຜ່ນດິນທັມແລະເປັນ
ແບບຢ່າງຂອງໂລກ ນີ້ຄື (ເສັ້ນທາງສູ່ສວັນ) ທຳດີກໍ່ຕອ້ງໄດ້ດີ

<u>14) ພົມວິຫານສີ່</u> ພວກເຮົາຄວນມີພົມວິຫານສີ່ປະຈຳໃຈ ມີດັ່ງນີ້
ຄື ຄວາມເມຕຕາ ມີຄວາມເມຕຕາຮັກໄຄ່ປາຖນາສັນຕິສຸກ

ເພາ່ທຸກຊີວິດເຮັດໃຫ້ໂລກນີ້ມີຄວາມອົບອຸ່ນຮົ່ມເຢັນຕະຫຼອດການລະນານ
ກະຣຸນາ ມີຄວາມສົງສານເອັນດູກູນາ ແກ່ທຸກໆຊີວິດໃນໂລກ
ມຸທິຕາ ມີຄວາມຍິນດີ ຊື່ນຊົມຕໍ່ຄວາມສຳເຣັດຂອງຄົນອື່ນຢ່າງບໍຣິສຸດໃຈ
ອຸເປກຂາ ມີຄວາມວາງໃຈເປັນກາງປົງໃຈວາງເສີຍ
ເຫັນທຸກສິ່ງຢ່າງເປັນທັມມະດາ

<u>ຄຳອະທິບາຍ</u> ສຳລັບຂໍ້ພົມວິຫານສີ່ນີ້ ເຮັດໃຫ້ມະນຸສເຮົາມີຄວາມຮັກທີ່ສົງສານກັນ ແລ້ວຊື່ນຊົມຍິນດີໃນສັງຄົມທົ່ວໄປວາງໃຈເປັນທັມມະດາ ບໍ່ມີຄວາມອິສສາຣິສຍາ ຖ້າພວກເຮົາພາກັນປະຕິບັດໃຫ້ເຖິງໃຫ້ໄດ້ໂລກນີ້ກໍ່ຈະແຈ່ມໃສ ການເປັນໂລກພົມໃນແດນມະນຸສນີ້ຄື (ເສັ້ນທາງສູ່ຊັ້ນພຣົມ)

<u>15) ອະຣິຍະສັຕສີ່</u> ພວກເຮົາຄວນຮູ້ວິທີດັບທຸກເພື່ອກ້າວ
ເຂົ້າສູ່ວິປັສນາຍານຄື ມີດັ່ງນີ້

ທຸກຂະ ຄືຄວາມບໍ່ສະບາຍການມີຄວາມເດືອດຮ້ອນໃຈທຸກເພາະເກີດດັບບໍ່ສົມຫວັງໄດ້ພັດພາກຈາກຄົນຮັກແລະຂອງຊອບໃຈແລະທຸກເພາະມີທາດຂັນ
ສະມຸໄທຍະ ຄືເຫດທີ່ເກີດຈາກທຸກ ຍອັນຄວາມຢາກມີ
ຢາກເປັນ ຢາກໃນກາມມະຄຸນ
ນິໂຣທະ ຄືຄວາມດັບທຸກ ກຳຈັດຕັນຫາໃຫ້ສິ້ນໄປຈິຕສງົບວາ່ງ
ຈາກກິເລດແລະນິວອນ
ມັກຄະ ຄືຂໍ້ປະຕິບັດໃຫ້ເຖິງຄວາມດັບທຸກ ມີສີນສະມາທິແລະປັນຍາແລະມັກຄະ ມີອົງແປດປະການຕາມທາງສາຍກາງ ມັຊຊີມາປະທາ ຄື
ສັມມາທິດຖິ ປັນຍາເຫັນຊອບ ວິປັສນາຍານຄືຕັສຮູ້ ອະຣິຍະສັຕສີ່
ສັມມາສັງກັບປະ ດຳຣິຊອບຄິດຫລີກຈາກກາມມະຣົມ ອະພັຍບໍ່ຈອ່ງຮ້າຍ
ບໍ່ຄິດໃຫ້ຜູ້ອື່ນເດືອດຮອ້ນ
ສັມມາວາຈາ ເຈຣະຈາຊອບເວົ້າຈິງ ອອ່ນຫວານ ມີໄມຕຣີ
ສັມມາກັມມັນຕະ ການທຳງານຊອບ ເວັ້ນຈາກການເປັນໂຈນ
ສັມມາອາຊີວະ ລຽ້ງຊີບຊອບ ເວັ້ນມິອາຊີບຜິດກົດໝາຍ

ສັມມາວາຍາມະ ພຽນຊອບພະຍາຍາມ ລະອະກຸສົນ ລະຄວາມຊົ່ວ ແລະ
ພະຍາຍາມບຳເພັນບຸນ

ສັມມາສະຕິ ລະລຶກຊອບ ຄຸມສະຕິສຳຣວມໃຈ ຢູ່ສເມີ

ສັມມາສະມາທິ ຕັ້ງໃຈໄວ້ຊອບ ຄືຈະເຣີນຍານສີ່

ຄຳອະທິບາຍ ສຳລັບຂໍ້ນີ້ ມີອົງແປດປະການຊຶ່ງເປັນຫົນທາງການປະຕິບັດ ໃຫ້ສອດຄ່ອງກັບການຄອງຊີບປະຈຳວັນ ແລະເປັນຫົນທາງແຫ່ງຄວາມດັບທຸກຂອງມວນມະນຸສທັງຫລາຽ ບໍ່ວ່າຈະດັບທາງກາຽແລະທາງໃຈກໍ່ດີ ແມ່ນແຕ່ພຣະພຸທເຈົ້າກໍ່ໄຊ້ຂໍ້ນີ້ເປັນການປະຕິບັດ ເພື່ອວິມຸດຕິ ຄື ຄວາມຫລຸດພົ້ນຈາກການມີຄວາມທຸກນັ້ນເອງ ນີ້ຄື ( ເສັ້ນທາງສູ່ພຣະນິພານ)

<u>16) ສັນຕິສຸຂຖາວອນ</u> ປະເທສລາວເມື່ອຊິ້ນການຂັດແຍ່ງດ້ານການເມືອງແລະສັງຄົມ ກໍ່ຄືຄວາມເຂົ້າໃຈຂອງຄົນໃນຊາຕ ຄົນໃນຊາຕປາຖນາແຕ່ຄວາມຢູ່ເຢັນເປັນສຸຂ ບໍ່ຢາກຈະຂ້າຟັນລັນແທງກັນບໍ່ຢາກຈະເປັນ ໂຈນໃຈ ໂຫດຫຽ້ມ ໂຈຣະກັມປຸ້ນຈີ້ ບໍ່ຢາກຈະເປັນຄົນອັຕພານລັກຊັບຂ້າເຈົ້າເອົາຂອງ ຂົ່ມຂືນສຳເນົາ ບໍ່ເອົາປຽບເອົາລັດກັນບໍ່ຢ້ານລື່ນຢ້ານເຫລືອກັນ ບໍ່ມີມົນທິນໃນໃຈບໍ່ຢ້ານວ່າໃຜຈະມາຂ້າ ບໍ່ຢ້ານວ່າໃຜຈະມາລັກຂອງຫຼືປຸ້ນຈີ້ ປະຊາຊົນລາວທົ່ວທັງປະເທສບໍ່ວ່າຈະແມ່ນຊົນຊາຕໃດ ຊົນເຜົ່າໃດແລະທຸກເພດທຸກໄວ ກໍ່ຍຸທ່າງນອນຕາຫລັບເຕັມນ່ວຽ  ເພາະມີຄວາມປື້ມປິຕິຍິນດີໃນຊີວິດ ມີແຕ່ຄວາມເບີກບານມ່ວນຊື່ນເພາະໄປມາຫາຊູ່ກັນສະບາຽ ຂຶ້ນເຮືອນໄຕ້ໄດ້ເກືອ ຂຶ້ນເຮືອນເໜືອໄດ້ເຂົ້າຄວາມເວົ້າກໍ່ບໍ່ໝ່າຽ ມີຄວາມເອື້ອເຟື້ອເພື່ອແຜ່ແລະຢຽ້ມຢາມຖາມຂ່າວກັນ ທຸກໆສະຖານທີ່ທົ່ວປະເທສຈະຕອ້ງມີຄວາມສງົບງຽບປັສຈາກຄວາມຊົ່ວຮ້າຽທັງປວງ ກໍ່ຍອ້ນພວກເຮົາມີສິນທັມປະຈຳໃຈແລ້ວຊອກສແວງຫາທັມມະເຂົ້າຕົວບໍ່ທຳຊົ່ວເພາະກົວບາບນີ້ແຫລະ ນ້ຳໃຈຄົນຫາໃສຈະທຽບທັນຄັນພວກເຮົາຊວ່ຍກັນປະຕິບັດຕາມທີ່ໄດ້ກ່າວມາຂ້າງເທິງນີ້ ສັນຕິສຸກຖາວອນກໍ່ເກີດຂື້ນງ່າຽດາຽແທ້ແລ້ວ

ອັນທີ່ໄດ້ກ່າວມາຂ້າງເທິງນີ້ ເປັນພຽງຫົວຂໍ້ໃຫ່ຽແລະອະທິບາຽພຽງເລັກນອ້ຽ

## ຈຸດປະສົງໃນການຈັດຕັ້ງຣະບອບການປົກຄອງ ລາວອິສຣະໃໝ່ ເພື່ອປະຊາທິປະໄຕ ມີຄື

(1) ເພື່ອເອົາລາວຮ່ວມລາວໃຫ້ໄດ້ເອກຣາຊສົມບູນແລະປະກາດຣະບອບ ລາວໃໝ່ ຄືປະຊາທິປະໄຕທົ່ວປະເທສໃຫ້ຊາວໂລກຮັບຮູ້

(2) ເພື່ອຜົກຕົວອອກຈາກການເປັນຫົວເມືອງຂື້ນແບບໃໝ່ຂອງຈັກພັດທັງຫຼາຍ

(3) ເພື່ອໃຫ້ປະເທສລາວເປັນປະເທສ ທີ່ມີປະສິດທິພາບໃນດ້ານທັມມະຫຼື ຍຸຕິທັມເໜືອໂລກ ໂດຍບໍ່ມີໃຜເໜືອນແລະບໍ່ເໝືອນໃຜຊຶ່ງເດີນຕາມເສັ້ນທາງ ຂອງອົງສັມມາສັມພຸທເຈົ້າ-ບໍ່ເຄັ່ງຈົນເກີນໄປແລະບໍ່ຍານຈົນເກີນໄປ

(4) ເພື່ອສ້າງປະເທສລາວໃຫ້ມີຄວາມຈະເຣີນຮຸ່ງເຮືອງ ທັງສອງດ້ານນີ້ ຄື ດ້ານວັດຖຸແລະຈິດໃຈ

(5) ເພື່ອສັນຕິສຸກຖາວອນຂອງປະຊາຊົນລາວ ແລະ ຊາວໂລກທຸກຖວັນໜ້າໃນອານາຄົດ

(6) ເພື່ອເປັນແບບຢ່າງທີ່ດີໃຫ້ແກ່ຊາວໂລກ ແລະສັນຕິພາບຂອງໂລກ ໃນອານາຄົດດວ້ຽອິສຣະທັມຕາມຄຳສອນຂອງພຣະພຸທເຈົ້າ

ໃນການຕໍ່ສູ້ນັ້ນພວກເຮົາຕອ້ງເອົາຊາຕເປັນໃຫ່ຽ ຄວາມລັບບໍ່ໃຫ້ຄົນພາຽ ນອກຮູ້ເດັດຂາດນອກຈາກຄົນພາຽໃນການຈັດຕັ້ງ ແລະໃຫ້ຮູ້ວິທີການຂອງ ສັດຕຣູທີ່ຢູ່ໄກ້ແລະຢູ່ໄກ ສວ່ນວຽກການກອບກູ້ອິສຣະພາບລາວນັ້ນ ຕອ້ງເຮັດດວ້ຽຄວາມພໍໃຈ

ໃນການໄປທຳບຸນໃຫ້ທານຢູ່ໃສກໍ່ຕາມ ພວກຊາວພຸທທັງຫລາຽຈະໄດ້ກາ່ວ ສໍຣະເສີນ ພຣະພຸທຄຸນວາ່ ອິຕິປິໂສພະຄະວາ ອາຣະຫັງສັມມາສັມພຸທໂທ ວິຊ ຊາຈະຣະນະສັມປັນ ໂນສຸກຄະ ໂຕໂລ ກະວິທູອະນຸຕຕະ ໂລປູຣິສາທັມມະສາຣະຖິ ສັຕຖາເທວະມະນຸສສະນັງ ພຸທໂທພະຄະວາຕິ ( ໃນຄວາມກາ່ວສໍຣະເສີນນີ້ ພວກເຮົາຊາວພຸທຕອ້ງເຂົາໃຈຈັ່ງຊັ້ນ ກະຣຸນາເອົາໃຈໃສ່ ໃນຄວາມແປລ ມີດັ່ງຕໍ່ລົງໄປນີ້

1-ອິຕິປິໂສພະຄະວາ-ພຣະພຸທເຈົ້າມີຄວາມດີຈັ່ງຊີ້ ໆ

2-ອາຣະຫັງ-ຄືພຣະອົງໄດ້ເປັນພຣະອໍຣະຫັນ ຜູ້ມີຄວາມບໍຣິສຸດ ຫ່າງໄກ
ຈາກກິເລສໄດ້ທຳລາ່ຽກົງກຳເພາງ ກາຣວຽນຕາຍວາຍເກີດ ສົມຄວນໄດ້
ເປັນຄຣູສອນແກ່ຜູ້ອື່ນ ທັງສົມຄວນໄດ້ຮັບຄວາມເຄົາຣົບ

3-ສັມມາສັມພຸທໂທ-ເປັນຜູ້ຕັສສະຣູ້ ຣອບດວ້ຽຕົນເອງ

4-ວິຊຊາຈາຣະນາສັມປັນໂນ-ເປັນຜູ້ເຖິງພອ້ມດວ້ຽຄວາມຮູ້ວິຊຊາແລະພິ
ຈາຣະນາ ຄືຄວາມປະພຶຕອັນໃດແກ່ພາກປະຕິບັຕໝາຽຄວາມວາ່ພຣະພຸທເຈົ້າ
ເປັນຜູ້ມີທັງຄວາມຮູ້ແລະຄວາມປະຕິບັດໂຕຈິງໄປພອ້ມກັນ

5-ສຸຄໂຕ-ຫຼືອາ່ນວາ່-ສຸກຄະໂຕ-ເປັນຜູ້ສະເດັດໄປໃນທາງທີ່ຖືກຕອ້ງແລ້ວ
ຄືໄດ້ບຳເພັນເປັນບູຣຸສຜູ້ປະເສີດ ໄດ້ຕັສຮູ້ເປັນພຣະສັມມາສັມພຸທເຈົ້າ ແລະ
ໄດ້ເທສນາສັງສອນມະນຸສໃຫ້ພົ້ນຈາກທຸກ ໄດ້ມອບສາສນາໃຫ້ມະນຸສ
ໄດ້ສືບທອດກັນມາ

6-ໂລກວິທູ-ອາ່ນວາ່-ໂລກະວິທູ-ເປັນຜູ້ຮູ້ແຈ້ງແລ້ວກຽ່ວກັບໂລກມະນຸສ ໄດ້
ເຂົ້າສັງຂານທັງຫລາຽຢາ່ງທີ່ຖວ້ນ ໄດ້ຮູ້ແລະເຂົ້າໃຈວິທີຊີວິຕຂອງມະນຸສ
ທີ່ເປັນໄປຕາມທັມະວິໃສ ພຣະອົງຈຶ່ງໄດ້ປົດປອ່ຽຕົວເອງຢູ່ເໜືອໂລກ
ຄື ເປັນອິສຣະຊົນ ເສຣີຊົນຢາ່ງແທ້ຈິງ

7-ອະນຸສຕະໂລປູຣິສາທັມມະສາຣະຖິ-ເປັນຜູ້ສັ່ງສອນຄົນຝຶກແອບຄົນ
ທີ່ຄວນ ຝຶກໂດຍທີ່ຫາຜູ້ທຽບບໍ່ມີ

8-ສັຕຖາເທວະມະນຸສສານັງ-ເປັນສາສດາຈາຣຂອງ
ເຫຼົ່າເທວະດາ ແລະ ມະນຸສທັງຫລາຽ

9-ພຸທໂທ-ເປັນຜູ້ຕື່ນແລ້ວ ແລະເບີກບານໝາຽຄວາມວາ່ເປັນຜູ້ຫລຸດພົ້ນຈາກ
ຄວາມຄຶດ ຈາກຄວາມເຫັນ ຈາກຄວາມປະພຶຕທີ່ປະຕິບັຕຢາ່ງຜິດໆຖືກໆກັນ
ມາ ພຣະອົງຍັງສາມາຖຊອ່ຽໃຫ້ຄົນອື່ນຫລຸດພົ້ນໄດ້ເໝືອນກັນ ຈາກຄວາມ
ເຊື່ອຖືຢາ່ງງົມງາຍປຣາສຈາກເຫດຜົນແລະໄຕ່ຕອງ ໃຫ້ເຫັນທາຕແທ້ຂອງ
ສິ່ງເຫຼົ່ານັ້ນ ພຣະອົງເປັນຜູ້ເບີກບານກໍ່ເພາະໄດ້ຢູ່ຫ່າງໄກຈາກກິເລສ ຄວາມ
ໂລບຄວາມໂກທແລະຄວາມຫລົງ

ປະຕິບັດພຸທທະພາຣະກິຈຂອງພຣະອົງ ຢ່າງມີອິສຣະເສຣີ

10-ພະຄະວະ ໂຕ-ທຣົງເປັນຜູ້ໂຊກດີປະກອບພາຣະກິຈໃດ ກໍ່ລຸລ່ວງໄປໂດຽດີ ທຣົງເປັນໃຫ່ຽ ແຈກຈ່ຽທັມມະແກ່ເທວະດາແລະມະນຸສ ( ນະອະຄຸນທັງເກົ້າຂອງພຣະອົງ ກໍ່ຄືກ່ວມານັ້ນແລ່ ) ນັບແຕ່ພຣະອໍຣະຫັນເປັນຕົ້ນ ຮອດພະຄະວາ ຫຼື ພະຄະວັນຕັງ

ລາວອິສຣະແມ່ນສາຽເລືອດຂອງພໍ່ແມ່ປະຊາຊົນລາວແລະທັງພີ່ນອ້ງຊາວພຸທ ລາວທົ່ວປະເທສ ແມ່ນຜູ້ປະກອບສວ່ນເສັຽສະລະທັງຊີວິດແລະເລືອດເນື້ອ ເພື່ອສະຖາປານາພຣະຣາຊອານາຈັກລາວ ຫລັງສົງຄາມ ໂລກຄັ້ງທີສອງແລະ ອັງເຊີນພຣະເຈົ້າແຜ່ນດິນ ອານາຈັກຫລວງພຣະບາງຂື້ນຄອງຣາຊສົມບັດ ປົກຄອງທົ່ວພຣະຣາຊອານາຈັກ-ລາວອິສຣະແມ່ນຜູ້ເທີດທູນອິສຣະພາບແລະ ເສຣີພາບຂອງມວນມະນຸສ ລາວອິສຣະແມ່ນຜູ້ຢຶດຖືແນວທາງຂອງພຣະ ພຸທທະສາສນາ ດວ້ຽຄວາມບໍຣິສຸດໃຈ ດັ່ງນັ້ນ ຈື່ງໄດ້ກ່າວວ່າ

( - ຊາຕ-ສາສນາ-ພຣະມະຫາກະສັຕ - )

ອົງປະເສີຖສາມສະຖາບັນນີ້ ໃຜກໍ່ຕາມ ບັງອາຈລົບລ້າງບັນທອນທຳຣາຍ ພວກລາວອິສຣະແລະລູກຫລານສືບສາຽເລືອດຂອງພວກເພີ່ນ ຈະໄຊ້ສິດທິ ອັນຊອບທັມເພື່ອຕໍ່ຕ້ານ ແມ່ນວ່າພຣະຣາຊອານາຈັກລາວໄດ້ປຽ່ນໄປເປັນ ສປປລາວ-ຕາມກົນອຸບາຽກົນຂອງແກວ ລາວອິສຣະມີສິດທິປອ້ງກັນ ຝ່າຍ ເສຣີປະຊາທິປະໄຕຕອ້ງປະກອບສວ່ນ ໃນກາຣປົກປັກຣັກສາອິສຣະພາບເສ ຣີພາບຂອງມວນມະນຸສ ອັນນີ້ແມ່ນຂໍ້ຄວາມເດັດຂາດຂອງພວກເຮົາແລະຖື ເປັນຖແລງກາຣເອກພາບທົ່ວຂບວນກາຣລາວອິສຣະເກົ່າແລະໃໝ່ໄດ້ຊາບ ທົ່ວເຖີງກັນ-ໃນນາມລາວອິສຣະ - ຕັ້ງຂື້ນມາເພື່ອຊວ່ຍເຫລືອປະຊາຊົນແລະ ຊາຕໃນຫລັກທັມມະປະຊາທິປະໄຕລາວຕອ້ງເປັນລາວແລະລາວຕອ້ງປົກ ຄອງລາວ - ( ພັກປະຊາຊົນຣລາວອິສຣະແມ່ນຂອງຄົນລາວທຸກຊົນເຜົ່າພັນ

ໃນນາມຜູ້ກໍ່ຕັ້ງ ຈອ່ຍ ອິສຣະ

ວຽງຈັນວັນທີ 25-5-00